ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

800
ເລກທີ /ຫກ
ນະຄອນຫຼວງວຽງຈັນ, ວັນທີ ກຸມພາ 2020

# ແຈ້ງທຶນການສຶກສາ

**ຮຽນ:** ທ່ານຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ກະຊວງ, ອົງການທຽບເທົ່າ, ສະຖາບັນການສຶກສາທຸກໆແຫ່ງ ແລະ ນັກສຶກສາທົ່ວໄປ.

**ເລື່ອງ:** ແຈ້ງທຶນການສຶກສາຂອງ Malaysia International Scholarship (MIS) ປະເທດ ມາເລເຊຍ ສໍາລັບສົກປີ 2020 – 2021.

- ອີງຕາມ ສໍາເນົາໜັງສືຈາກກະຊວງສຶກສາຂອງມາເລເຊຍ ສະບັບເລກທີ KPM.600-13/7/6/; ລົງວັນທີ 31 ມັງກອນ 2020 (ໂດຍຜ່ານສະໂໜດນໍາສົ່ງຈາກສະຖານທູດ ແຫ່ງ ສປປ ລາວ ທີ່ກົວລາລໍາເປີ) ສະບັບເລກທີ 106/ສລກ.ຫກ.20, ລົງວັນທີ 04 ກຸມພາ 2020.
- ອີງຕາມ ຄໍາເຫັນຂອງທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ຄັ້ງວັນທີ 26/2/20

ຫ້ອງການກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: Malaysia International Scholarship (MIS) ປະເທດ ມາເລເຊຍ ສະເໜີໃຫ້ທຶນການສຶກສາແກ່ ສປປ ລາວ ປະຈໍາສົກຮຽນ 2020-2021 ໃນລະດັບປະລິນຍາ ໂທ ແລະ ປະລິນຍາເອກ ສາຂາວິຊາ: Science and Engineering, Agriculture and Fisheries, Economics and Islamic Finance, Information and Communication Technology, Biotechnology, Biosecurity and Food Safety, Infrastructure and Utility, Environmental Studies, Health not including nursing, medicine, clinical pharmacy ຫຼັກສູດການຮຽນ - ການສອນ ເປັນພາສາອັງກິດ ໂດຍເປີດຮັບສະໝັກຜູ້ທີ່ມີຈຸດປະສົງຢາກໄປຮຽນຕໍ່ທີ່ມະຫາວິທະຍາໄລແຫ່ງຕ່າງໆຂອງປະເທດດັ່ງກ່າວພາຍໃຕ້ທຶນການສຶກສາຂອລັດຖະບານມາເລເຊຍ ເງື່ອນໄຂຝ່າຍໃຫ້ທຶນຮັບຜິດຊອບມີ: ຄ່າຮຽນ, ຄ່າທີ່ພັກ, ຄ່າເບ້ຍລ້ຽງປະຈໍາເດືອນ.

## I. ເງື່ອນໄຂຂອງຜູ້ສະໝັກ:

- ເປັນຄົນລາວຖືສັນຊາດລາວອາຍຸບໍ່ໃຫ້ເກີນ 40 ປີ ສໍາລັບປະລິນຍາໂທ ແລະ ປະລິນຍາເອກ 45 ປີ
- ສໍາເນົາໃບປະກາດ ແລະ ໃບຄະແນນທີ່ຈົບຕາມລໍາດັບຂອງການສະໝັກໃນລະດັບດີ CGPA 3.5 ຂຶ້ນໄປ
- Recommendation Letter 02 ທ່ານຈາກບ່ອນທີ່ຕົນເອງສັງກັດ ຫຼື ສະຖາບັນທີ່ຮຽນຈົບ
- ປະຫວັດສ່ວນຕົວ (Curriculum Vitae)
- ແຜນຄົ້ນຄ້ວາ (Proposal 1000 ຄໍາສັບຂຶ້ນໄປ)
- ຕ້ອງມີຄວາມຮູ້ພາສາອັງກິດໃນລະດັບດີ IELTS 6,5 ຫຼື TOEFL 580

II. ວິທີສະໝັກ ແລະ ວັນປິດຮັບສະໝັກ:

ແບບຟອມສະໝັກ ແລະ ວິທີສະໝັກແມ່ນສະໝັກທາງ Online ຕາມເວບໄຊ Website http://biasiswa.moe.gov.my/INTER/index.php, email penawaran.bb@moe.gov.my ວັນປິດຮັບສະໝັກ **ວັນທີ 15/03/2020** ພາຍຫຼັງສະໝັກເປັນອອນລາຍແລ້ວໃຫ້ສົ່ງລາຍຊື່ມາຍັງກົມກິດຈະການນັກສຶກສາເພື່ອຊາບ ແລະ ຕິດຕາມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ສົ່ງຜູ້ສະໝັກໃຫ້ທັນເວລາດ້ວຍ.

ຮັກສາການຫົວໜ້າຫ້ອງການ

ທິບພະມີນ ຈັນທະລັງສີ